K A N S A S

RODERICK L. BREMBY, SECRETARY — KATHLEEN SEBELIUS, GOVERNOR

DEPARTMENT OF HEALTH AND ENVIRONMENT

ຢູ່ກັບທີ່ຫຼືໜີອອກມາ?

ຢູ່ກັບທີ່: ການຢູ່ກັບທີ່ແມ່ນການຢູ່ໃນເຮືອນເມື່ອເກີດມະຫັນຕະໄພທີ່ບໍ່ປອດໄພທີ່ຈະອອກຈາກເຮືອນໄປຫຼືໄປຂ້າງນອກ. ຈຳນວນເວລາທີ່ຈະຕ້ອງຢູ່ໃນເຮືອນນັ້ນຂຶ້ນກັບສະພາບຂອງມະຫັນຕະໄພ. ທ່ານອາດຈະຕ້ອງໄປລວມຢູ່ບໍລິເວນໃດໜຶ່ງ ໃນບ້ານເຊັ່ນ: ຫ້ອງໃຕ້ດິນ, ຫ້ອງເກັບຂອງ, ຫ້ອງນິລະໄພ ຫຼືຢູ່ບໍລິເວນທີ່ເໜືອພື້ນ. ທ່ານຄວນຈະສຳຮອງອາຫານ, ນຳ້ ແລະສິ່ງຈຳເປັນອື່ນໆ ໃນເຮືອນຂອງທ່ານໃນກໍລະນີທີ່ຕ້ອງຢູ່ຫຼາຍມື້ ຫຼືທ່ານອາດຕ້ອງຂົນເຄື່ອງພວກນີ້ໄປນຳຖ້າຕ້ອງໜີ ອອກມາ (ເບິ່ງລາຍລະອຽດ ຂ້າງລຸ່ມ).

ຖ້າທ່ານຕ້ອງຢູ່ໃນເຮືອນຍ້ອນອາກາດທາງນອກມີເຊື້ອໂລກ:

- ນຳເດັກນ້ອຍ ແລະ ເດັກເຂົ້າໄປທາງໃນທັນທີ
- ອັດປ່ອງຢ້ຽມ ແລະ ປະຕູ
- ມອດພັດລົມ, ລະບົບເຄື່ອງເຮັດຄວາມຮ້ອນ ແລະ ແອ
- ໄປຫ້ອງທີ່ປອດໄພ. ອັດປະຕູ, ປ່ອງຢ້ຽມ, ພັດລົມດູດອາກາດ ແລະ ຊ່ອງຫວ່າງອື່ນໆດ້ວຍແຜ່ນພລາສຕິກ ແລະ ເທບກາວ, ຄວນຈະເຮັດໃຫ້ແຜ່ນພລາສຕິກຕັດງ່າຍ ແລະ ເຮັດເຄື່ອງໝາຍໄວ້ເພື່ອກຽມພ້ອມໃນການໃຊ້. ຜ້າຂົນໜູ ຊຸ່ມກໍ່ສາມາດໃຊ້ອັດຊ່ອງຫວ່າງລະຫວ່າງທາງຍ່າງໄດ້ຄືກັນ.

ຂັ້ນຕອນການຢູ່ກັບທີ່ນີ້ສາມາດໃຊ້ໄດ້ໃນກໍລະນີຢູ່ໃນໂຮງຮຽນແລະບ່ອນເຮັດວຽກໄດ້ເຊັ່ນກັນ.

ໜີອອກມາ: ເຮັດແຜນສຳຫຼັບໜີອອກມາ. ຕ້ອງເຮັດໃຫ້ໝັ້ນໃຈວ່າສະມາຊິກທຸກຄົນໃນຄອບຄົວຮູ້ບ່ອນ ເປີດ- ປິດຫຼັກຂອງ ນຳ້, ໄຟຟ້າ, ແກສ ໃນບ້ານແລະຮູ້ວິທີມອດຖ້າຈຳເປັນ. ມີກະແจໄຂນອດແລະຄົມໄວ້ຕິດບ້ານເພື່ອກໍລະນີນີ້, ໃຊ້ແຜນທີ່, ວາງແຜນທາງເດີນໄປຫຼາຍບ່ອນ ຫຼາຍທິດທາງ. ນີ້ຈະເປັນທາງເດີນທີ່ທ່ານສາມາດໃຊ້ຖ້າບໍ່ສາມາດອອກຕາມແຜນຜັງ ທີ່ໄດ້ຮັບອານຸຍາດ.

ຕ້ອງຕື່ນຕົວຕາມຄຳແນະນຳ- ນີ້ອາດຈະແມ່ນການອອກອາກາດທາງໂທລະທັດແລະວິທະຍຸ. ໝັ້ນໃຈວ່າສະມາຊິກທຸກຄົນໃນຄອບຄົວຮູ້ສັນຍານເຕືອນໄພໃນຊຸມຊົນຂອງທ່ານ ແລະ ເຂົ້າໃຈວ່າໝາຍຄວາມວ່າແນວໃດ. ພະນັກງານຈັດການເຫດສຸກເສີນຫຼືການາຊາດອາເມລິການາສາມາດໃຫ້ຂໍ້ມູນເຫຼົ່ານີ້ແກ່ທ່ານໄດ້.

ທ່ານຄວນໜີອອກມາກໍ່ຕໍ່ເມື່ອມີການສັ່ງຈາກອຳນາດການປົກຄອງເທົ່ານັ້ນ. ຖ້າມີຄຳສັ່ງໃຫ້ໜີອອກມາທ່ານຕ້ອງປະຕິບັດ ທັນທີ. ຖ້າເປັນໄປໄດ້ບອກເພື່ອນ ແລະ ຍາດພີ່ນ້ອງທີ່ຢູ່ນອກເມືອງວ່າທ່ານຈະໄປໃສ. ລ່ອກປະຕູເຮືນ ແລະ ນຳເຄື່ອງໃຊ້ ສຸກເສີນມານຳທ່ານ. ໄປຕາມທາງທີ່ເຈົ້າໜ້າທີ່ແນະນຳ. ເຊື່ອຟັງກົດຈໍລະຈອນ ແລະ ປ້ອງກັນເດັກໄວ້ໃນບ່ອນນັ່ງທີ່ປອດໄພ.

ຖ້າທ່ານມີພາຫະນະໃຫ້ຮັກສາໃຫ້ຢູ່ໃນສະພາບທີດີແລະມີນຳ້ມັນພຽງພໍຕາມທີ່ທ່ານສາມາດຈ່າຍໄດ້, ຖ້າບໍ່ມີພາຫະນະ ກຽມການເດີນທາງກັບຜູ້ອື່ນໄວ້ລ່ວງໜ້າ.

DIVISION OF HEALTH
CENTER FOR PUBLIC HEALTH PREPAREDNESS
CURTIS STATE OFFICE BUILDING, 1000 SW JACKSON ST., STE. 330, TOPEKA, KS 66612

Voice 785-296-8605 Fax 785-291-2625 http://www.ksprepared.org
Disease Reporting & Public Health Emergencies:
Toll Free Phone 1-877-427-7317 Toll Free FAX 1-877-427-7318